ຜູ້ເບິ່ງແຍງດູແລ ແລະ ອົງການເວົ້າແນວໃດແດ່ ກ່ຽວກັບການບໍຣິການຜູ້ໃຫຍ່ໃນເວລາກາງເວັນ (Adult Day Services)?

"ທ່ານງ່າຍທີ່ສຸດທີ່ຈະຮັກວຽກນຳ. ຂອບໃຈຫລາຍໆສຳລັບທຸກໆຢ່າງ ທີ່ທ່ານເຮັດໃຫ້."

"ພະນັກງານດີຫລາຍ ແລະ ເປັນຫ່ວງໃຍນຳ."

"ຊ່ວຍໄດ້ຫລາຍ ແລະ ດີນຳທາງໄຫຣະສັບ. ຄອບຄົວ ແລະ ລູກຄ້າຍົກຍ້ອງພະນັກງານຢ່າງສູງ."

"ເຮົາເຈົ້າເຮັດນຳລູກຄ້າ ແລະ ຄອບຄົວດ້ວຍຄວາມນັບຖືຕະລອດເວລາ."

"ນາງມັກຫລາຍໃນກິຈກັມທີ່ຖືກເອົາໃຫ້."

"ກິຈກັມແມ່ນດີທີ່ສຸດ. ຍ້ອຍມັກຫ້ອງຮຽນການວາດພາບ."

"ປາດຖະນາຢາກມາເວົ້າທຸກໆມື້!"

"ຍ້ອຍຄິດວ່າອັນນີ້ແມ່ນແຫລ່ງຊ່ວຍເຫລືອທີ່ມີຄຸນຄ່າສຳລັບລູກຄ້າຂອງ ພວກເຮົາ! ຂໍຂອບໃຈຫລາຍໆ!"

*"ອັນທີ່ຈິງແລ້ວ, ໂດຍປາສຈາກໂຄງການອັນນີ້, ຍ້ອຍເຊື່ອວ່າມັນຈະບໍ່ເປັນໄປ ໄດ້ທີ່ວ່າສ່ວນນຶ່ງຂອງລູກຄ້າຂອງຍ້ອຍຈະຍັງຢູ່ໃນເຮືອນຂອງ ເຮົາເຈົ້າຢູ່ຕໍ່ໄປ. ພ້ອມທັງ, ສ່ວນນຶ່ງຂອງຜູ້ເບິ່ງແຍງດູແລຈະບໍ່ສາມາດທີ່ຈະເອົາການບໍຣິການ **CG** ໃຫ້."*

"ແລະ ເຮົາເຈົ້າຫົວເລາະນຳນາງ. ສຳຄັນຫລາຍທີ່ສຸດ. ເຮົາເຈົ້າສາມາດເຮັດ ໃຫ້ນາງຮູ້ສຶກອົບອຸ່ນໃຈເມື່ອເວລາເວົ້າລົມນຳເຮົາເຈົ້າ."

"ເຮົາເຈົ້າດີຫລາຍເມື່ອເວລາຍ້ອຍຢາກຈະເວົ້າລົມນຳພະນັກງານກ່ຽວ ກັບບັນຫາທີ່ແມ່ຂອງຍ້ອຍກຳລັງມີຢູ່. ເຮົາເຈົ້າເອົາໃຈໃສ່ຕໍ່ຄວາມຕ້ອງ ການຂອງນາງ."

ເພື່ອຮຽນຮູ້ຂໍ້ມູນເພີ່ມເຕີມກ່ຽວກັບການບໍຣິການ Adult Day Services ກະລຸນາຕິດຕໍ່ຫາຫ້ອງການ Home and Community Services ຫ້ອງຖິ່ນຂອງທ່ານຫລືແວ່ເຂົ້າຢ້ຽມຊົມເວັບໄຊທ໌ຂອງ Adult Day Services ໄດ້ທີ່:
www.dshs.wa.gov/adultdayservices

*ການບໍຣິການ **Adult Day Services** ແມ່ນໂຄງການກາງເວັນທີ່ຖືກຄວບຄຸມເບິ່ງນຳ.*

*ໂຄງການສາມາດເປັນບ່ອນວ່າຈະແມ່ນໂຄງການ **Adult Day Care (ADC)** ຫລືໂຄງການ **Adult Day Health (ADH).***

Washington State Department of Social & Health Services
Transforming lives
DSHS 22-1731 LA (8/17) Laotian

ໂຄງການ **Adult Day Services**

ພະແນກບໍຣິການຄົນແກ່ຊາຣາ ແລະ ການຜູ້ມອຸຣະຍະຍາວ
(Aging and Long-Term Support Administration)

ໂຄງການ **Adult Day Care (ADC)**

ໂຄງການ **ADC** ໃຫ້ການບໍຣິການຈຸດສຳຄັນສຳລັບຜູ້ໃຫຍ່ທີ່ມີສະພາບພະຍາບານ ຫລື ເສັ່ຽງຄະຜູ້ທີ່ບໍ່ຕ້ອງມີການເຂົ້າແຊກແຊງນຳ ຫລື ການບໍຣິການຂອງນາຍພະຍາບານຜ່ານການສອບເສັ່ງມາແລ້ວ ຫລື ຫມໍບຳບັດການຝຶກຫັດທີ່ມີໃບອະນຸຍາດ.

- ການບໍຣິການເບິ່ງແຍງດູແລສ່ວນຕົວ
- ການບໍຣິການສັ່ງຄົມອີງຕາມພື້ນຖານການປຶກສາ
- ການຕິດຕາມເບິ່ງນຳສຸຂະພາບເປັນປະຈຳໂດຍ **RN**
- ກິຈກັມການຮັກສາໂຣກທົ່ວໄປ
- ການສຶກສາກ່ຽວກັບສຸຂະພາບທົ່ວໄປ
- ການຄວບຄຸມເບິ່ງນຳ ແລະ ການປ້ອງການ
- ການຊ່ວຍເຫລືອນຳການອົນລີ່ງໄປມາ
- ການປະຖົມພະຍາບານ
- ກິຈກັມການພັກຜ່ອນ/ສັ່ງຄົມ
- ຄາບເຂົ້າທີ່ມີພະລານາມັຍ ແລະ ຂອງກິນຫລິ້ນ
- ລຸດຊົ່ວໂມງ **CARE** ລົງໂດຍ **30** ນາທີສຳລັບທຸກໆຊົ່ວໂມງຂອງການມາເຮັດວຽກ, ສູງເຖິງສອງຊົ່ວໂມງຕໍ່ມື້

ແມ່ນໃຜມີເງື່ອນໄຂໄດ້ຮັບ **ADC** ແດ່? ຄົນໃດຄົນນຶ່ງຜູ້ທີ່:

- ມີການຕົຣາຄາປະເມີນຜົນປັດຈຸບັນຢູ່ໃນ **CARE**
- ຖືກຈົດຊື່ເຂົ້າຢູ່ໃນໂຄງການ **COPES, RCL, new Freedom,** ຫລື ການອອກເງິນທຶນທີ່ຖືກອະນຸມັດໃຫ້ອື່ນໆ, ແລະ
- ມີຄວາມຕ້ອງການທີ່ຍັງບໍ່ທັນຖືກຕອບສະນອງເທື່ອສຳລັບການບໍຣິການຈຸດສຳຄັນສິ່ງຕໍ່ລົງໄປນີ້ແນວນຶ່ງ ຫລື ຫລາຍແນວ:
  - ການບໍຣິການເບິ່ງແຍງດູແລສ່ວນຕົວ
  - ການຄວບຄຸມເບິ່ງນຳສຸຂະພາບພ້ອມທັ້ງການປຶກສາຈາກ**RN**
  - ກິຈກັມການຮັກສາໂຣກທົ່ວໄປ
  - ການຄວບຄຸມເບິ່ງນຳ ແລະ/ຫລື ການປ້ອງການ
  - ອາສັຍຢູ່ໃນສະພາບແວດລ້ອມແບບຢູ່ໃນເຮືອນ

ໂຄງການ **Adult Day Health (ADH)**

ADH ໃຫ້ການເບິ່ງແຍງຜູ້ເຖົ້າທີ່ຊຳນານ ແລະ/ຫລື ການຮັກສາໂຣກໃຫ້ດີຄືນຄືເກົ່າເພີ້ມເຕີມໃສ່ການບໍຣິການຈຸດສຳຄັນທີ່ໄດ້ຖືກສະເໜີໃຫ້ຢູ່ນຳ **ADC.**

- ການບໍຣິການຈຸດສຳຄັນທຸກໆຢ່າງຢູ່ພາຍໃນ **ADC**

ແລະ

- ການເບິ່ງແຍງຜູ້ເຖົ້າທີ່ຊຳນານ
- ການຮັກສາໂຣກທີ່ຊຳນານ:ການຮັກສາໂຣກທາງດ້ານຮ່າງກາຍ ຫລື ວິຊາຊີບ, ການຮັກສາໂຣກປົວແປງ ຫລື ໃຫ້ດີຄືນຄືເກົ່າ, ການສຶກສາພະຍາດການປາກເວົ້າ-ພາສາ, ແລະ ການວັດແທກການຟັງສຽງ
- ການປຶກສາອູ້ມອູ, ການຄວບຄຸມເບິ່ງນຳເອກສານ
- ການອົນລີ່ງໄປມາໄດ້ຖືກລວມຢູ່ໃນອັດຕຣາປະຈຳວັນ
- ບໍ່ມີການດັດແປງໃນຊົ່ວໂມງຂອງ **CARE**

ແມ່ນໃຜມີເງື່ອນໄຂໄດ້ຮັບ **ADH** ແດ່? ຄົນໃດຄົນນຶ່ງຜູ້ທີ່:

- ມີການຕົຣາຄາປະເມີນຜົນປັດຈຸບັນຢູ່ໃນ **CARE**
- ຖືກຈົດຊື່ເຂົ້າຢູ່ໃນໂຄງການ **COPES, RCL, new Freedom,** ຫລື ການອອກເງິນທຶນທີ່ຖືກອະນຸມັດໃຫ້ອື່ນໆ
- ມີຄວາມຕ້ອງການທີ່ຍັງບໍ່ທັນຖືກຕອບສະນອງເທື່ອສຳລັບສິ່ງຕໍ່ລົງໄປນີ້ແນວນຶ່ງ ຫລື ຫລາຍແນວ:
  - ການເບິ່ງແຍງຜູ້ເຖົ້າທີ່ຊຳນານ
  - ການຮັກສາໂຣກທີ່ຊຳນານ
  - ການປຶກສາ
- ອາສັຍຢູ່ໃນສະພາບແວດລ້ອມແບບຢູ່ໃນເຮືອນ, ສະຖາບັນການອາສັຍຢູ່ທີ່ຖືກຊ່ວຍເຫລືອນຳ ຫລື ເຮືອນຄອບຄົບຜູ້ໃຫຍ່ທີ່ບໍ່ມີການບໍຣິການທີ່ຕ້ອງການໄວ້ໃຫ້